ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຫົວພັນ ເລກທີ.....01..../ຈຂ

ຊຳເໜືອ,ວັນທີ.....21..ກຸມພາ2014

## ຄຳສັ່ງ

## ວ່າດ້ວຍການເພີ່ມທະວີວຽກງານສະກັດກັ້ນ

## ແລະ ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມທົ່ວແຂວງຫົວພັນ.

ເຖິງ: ບັນດາພະແນກການ, ອົງການທຽບເທົ່າ, ບັນດາເມືອງ, ກອງບັນຊາການ ປກຊ - ປກສ, ນັກທຸລະກິດ, ພໍ່ຄ້າຊາວຂາຍ, ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ປະຊາ ຊົນບັນດາເຜົ່າທີ່ດຳລົງຊີວິດຢູ່ ແຂວງຫົວພັນ.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 03 /ສພຊ, ລົງວັນທີ 21 ຕຸລາ 2003 ໝວດທີ III ,ມາດຕາ 14 ວ່າດວ້ຍສິດ ແລະ ໜ້າທີ່ ຂອງເຈົ້າແຂວງ.

- ອີງຕາມ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 27 / ນຍ ລົງວັນທີ 05 / 10 /2011 ວ່າດ້ວຍການເພີ່ມທະວີວຽກງານສະກັດກັ້ນ, ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ ແລະ ຄຳສັ່ງເລກທີ 22 / ຄລສພ ລົງວັນທີ 10 /08 / 2012 ຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການເພີ່ມທະວີວຽກງານສະກັດກັ້ນ ແລະ ຕ້ານຢາເສບຕິດ.

- ອີງຕາມ:ຄຳສັ່ງເລກທີ 1470 /ປກສ,ລົງວັນທີ11 /11 / 2013 ຂອງລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ ວ່າດ້ວຍການເພີ່ມທະວີວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ໃນທົ່ວສັງຄົມ.

ສະພາບຄວາມເປັນຈິງຂອງປະກົດການຫຍໍ້ທໍ້ໃນສັງຄົມ,ໃນປະຈຸບັນເວົ້າລວມ,ເວົ້າສະເພາະຢູ່ ແຂວງຫົວພັນ ເຫັນວ່າມີທ່າອ່ຽງເພີ່ມຂຶ້ນ, ແຜ່ລາມກ້ວາງອອກ ແລະ ແຊກຊ້ອນເຂົ້າໃນທຸກຂົງເຂດ,ທຸກຊັ້ນຄົນເປັນຕົ້ນ ບັນຫາຢາເສບຕິດ, ຊິງຊັບ, ກຸ່ມແກ້ງແຂ່ງລົດກວນເມືອງ, ສະຖານທີ່ມົ້ວສຸມ, ໄຟສັງຄົມ, ແຮງງານຕ່າງປະເທດເຂົ້າມາບໍ່ຖືກຕ້ອງ, ການສໍ້ລາດບັງຫຼວງ, ອຸປະຕິເຫດຕາມທ້ອງຖະໜົນ,ການນຳເຂົ້າ ແລະ ນຳໃຊ້ພາຫະນະທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍຂອງຄົນລາວ ແລະ ຄົນຕ່າງປະເທດ (ໂດຍສະເພາະແມ່ນລັກຊັບ) ແລະ ອື່ນໆ.

ຜ່ານມາພວກເຮົາກໍ່ໄດ້ເອົາໃຈໃສ່ສະກັດກັ້ນ ແລະ ແກ້ໄຂດ້ວຍຫຼາຍຮູບຫຼາຍສີຢ່າງຕັ້ງໜ້າ ແຕ່ຍັງມີຫຼາຍປະກົດການຫຍໍ້ທໍ້ທີ່ ຍັງສົ່ງຜົນສະທ້ອນເຖິງຄວາມສະຫງົບແລະ ຄວາມເປັນລະບຽບຮຽບຮ້ອຍຢູ່ໃນສັງຄົມເຊິ່ງເປັນອັນຕະລາຍຄຸກຄາມເຖິງຄວາມສະຫງົບ, ເປັນການກົດໜ່ວງຖ່ວງດຶງການພັດທະນາເສດຖະກິດ - ສັງຄົມຂອງແຂວງຫົວພັນ, ສົ່ງຜົນກະທົບຕໍ່ບົດບາດອິດທິພົນຂອງການຊີ້ນຳ - ນຳພາຂອງການນຳແຂວງ ແລະ ຂອງກຳລັງປ້ອງກັນຄວາມສະຫງົບໃນແຕ່ລະຂັ້ນ ອັນເປັນເງື່ອນໄຂໃຫ້ອິດທິກຳລັງປໍລະປັກ ແລະກຸ່ມຄົນບໍ່ດີນຳເອົາບັນຫາດັ່ງກ່າວເປັນຂໍ້ອ້າງເພື່ອສ້າງໃຫ້ກາຍເປັນບັນຫາທາງດ້ານການເມືອງ, ໂຄສະນາໃສ່ຮ້າຍປ້າຍສີຕ່າງໆນາໆຕໍ່ບົດບາດການນຳພາຂອງອົງຄະນະພັກແຂວງ ແລະ ຕໍ່ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມຂອງການຈັດຕັ້ງ ແລະ ອຳນາດການປົກຄອງແຕ່ລະຂັ້ນ.

ເພື່ອເຮັດໃຫ້ການດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ,ການສະເຫຼີມສະຫຼອງງານບຸນສຳຄັນຕ່າງໆຂອງຊາດ,ຂອງແຂວງ ແລະ ຂອງປະຊາຊົນເຜົ່າຕ່າງໆໃຫ້ມີບັນຍາກາດເບີກບານມ່ວນຊື່ນ ທັງເຮັດໃຫ້ສັງຄົມມີຄວາມສະຫງົບສຸກ ແລະ ມີຄວາມເປັນລະບຽບຮຽບຮ້ອຍເປັນພື້ນຖານໃຫ້ແກ່ການພັດທະນາເສດຖະກິດ - ສັງຄົມຂອງແຂວງ ປະສົບຜົນສຳເລັດຕາມລະດັບຄາດໝາຍທີ່ ອົງຄະນະພັກແຂວງໄດ້ກຳນົດໄວ້.

## ເຈົ້າແຂວງຫົວພັນອອກຄຳສັ່ງ:

1. ໃຫ້ທຸກພະແນກການ, ອົງການທຽບເທົ່າ,ການຈັດຕັ້ງ ແລະ ບັນດາເມືອງທົ່ວແຂວງເປີດຂະບວນການແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ ແລະ ພາຍໃນການຈັດຕັ້ງຂອງຕົນຢ່າງເປັນເຈົ້າການ ໂດຍເລີ່ມແຕ່ການໂຄສະນາສຶກສາອົບຮົມ,ປູກຈິດສຳນຶກໃຫ້ປະຊາຊົນ, ຊາວໜຸ່ມເຍົາວະຊົນຕາມສະຖານສຶກສາຕ່າງໆ,ສຶກສາອົບຮົມພະນັກງານ - ລັດຖະກອນຕາມສຳນັກງານ,ອົງການ,ຫົວໜ່ວຍທຸລະກິດຢ່າງຕັ້ງໜ້າ, ຜ່ານໂທລະພາບ, ວິທະຍຸ, ໜັງສືພິມ, ໂທລະໂຄງ ແລະ ອື່ນໆເພື່ອປຸກລະດົມສົ່ງເສີມສິ່ງທີ່ດີງາມ,ຕຳນິວິຈານສິ່ງທີ່ບໍ່ດີ,ສ້າງແນວຄິດຮັກຊາດ,ຮັກບ້ານເກີດເມືອງນອນ, ຮັກສາຮີດປະເພນີ ວັດທະນາທຳອັນດີງາມຂອງປະຊາຊົນບັນດາເຜົ່າ ໂດຍມອບໃຫ້ຄະນະພັກ, ອຳນາດການປົກຄອງທຸກຂັ້ນ, ເປັນຕົ້ນແມ່ນອຳນາດການປົກຄອງບ້ານ ແຈ້ງໃຫ້ທຸກຄອບຄົວເຂົ້າໃຈ ແລະ ພ້ອມກັນປະກອບສ່ວນເຮັດວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບໂດຍເລີ່ມຈາກແຕ່ລະຄອບຄົວ, ບ້ານ ແລະ ກົມກອງການຈັດຕັ້ງທຸກໆພາກສ່ວນຂຶ້ນມາ.

2. ຄະນະພັກ - ອຳນາດການປົກຄອງທຸກຂັ້ນຕ້ອງເອົາໃຈໃສ່ລົງຊີ້ນຳ - ບັນຊາຄຸ້ມຄອງປະຊາຊົນ,ພະນັກງານ - ລັດຖະກອນທີ່ ຢູ່ໃນຂົງເຂດຄວາມຮັບຜິດຊອບຂອງຕົນເພື່ອ